ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ: 603 /ຈນວ

ວັນທີ 25. 7. 2022

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ຄົ້ນຄ້ວາຈັດກິດຈະກຳ ຖະໜົນວຽງຮາຕີ ແຄມຖະໜົນລ້ານຊ້າງ ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ

- ອີງຕາມ ມາດຕາ 19, 20 ໝວດ 4 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ການຊີ້ນຳ ຂອງກອງປະຊຸມຄົ້ນຄ້ວາຈັດກິດຈະກຳ ຢູ່ຖະໜົນລ້ານຊ້າງ, ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ຄັ້ງວັນທີ 29 ມິຖຸນາ 2022.

## ເຈົ້າຄອງນະຄອນຫຼວງວຽງຈັນ ຕົກລົງ:

**ມາດຕາ 1** ກ່ຽວກັບຖະໜົນວຽງຮາຕີ:

ຖະໜົນວຽງຮາຕີ ໃນແນວຄວາມຄິດເບື້ອງຕົ້ນ ແມ່ນການຈັດສັນເອົາເຂດວຽງຮາຕີເກົ່າ ເບື້ອງ (ແຕ່ທະນາຄານລາວ-ຫວຽດ ຫາຕະຫຼາດເຊົ້າ) ແຄມຖະໜົນລ້ານຊ້າງ, ບ້ານຫັດສະດີ,ເມືອງຈັນທະບູລີ ໃຫ້ເປັນເຂດຈັດກິດຈະກຳວຽງຮາຕີ ວິຈິດສິນ (Viengraty Arts) ທີ່ເປັນພາບຫັດຖະກຳ ແລະ ວັດຕະກຳ ທີ່ເປັນສີໄມ້ລາຍມື ຂອງຄົນລາວສ້າງຂຶ້ນ ກົມກ່ອມກັບສຽງບັນເລງດົນຕີ ອ່ອນຊ້ອຍ ພື້ນເມືອງລາວ.

ຖະໜົນວຽງຮາຕີ ຄາດຄະເນ ຈະໃຫ້ເປີດແຕ່ເວລາ 18:00 - 23:00 ໂມງ ທຸກໆທ້າຍອາທິດ (ວັນສຸກ-ວັນອາທິດ).

**ມາດຕາ 2** ແຕ່ງຕັ້ງຄະນະຮັບຜິດຊອບ ຊີ້ນຳ - ນຳພາ ການຄົ້ນຄ້ວາ ຈັດກິດຈະກຳ ຖະໜົນວຽງຮາຕີ, ຊຶ່ງປະກອບມີບັນດາທ່ານ ດັ່ງນີ້:

1. ທ່ານຮອງເຈົ້າຄອງນະຄອນຫຼວງວຽງຈັນ ເປັນຜູ້ຊີ້ນຳ
2. ທ່ານຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ ເປັນຫົວໜ້າ
3. ທ່ານຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເປັນຮອງຫົວໜ້າ
4. ທ່ານຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ ເປັນຄະນະ
5. ທ່ານຮອງຫົວໜ້າຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງ ນະຄອນຫຼວງວຽງຈັນ ເປັນຄະນະ
6. ທ່ານຮອງເຈົ້າເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ເປັນຄະນະ
7. ບັນດາທ່ານ ໃນຄະນະທີ່ປຶກສາສະຖາປານິກ ເປັນຄະນະ
8. ຕາງໜ້າ ກົມວິຈິດສິນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ

**+ ສິດ ແລະ ໜ້າທີ່ ຂອງຄະນະດັ່ງກ່າວ ມີດັ່ງນີ້:**

1. ກຳນົດວັດຖຸປະສົງ, ເປົ້າໝາຍ ແລະ ອອກແບບແຜນຜັງລວມ ແລະ ແຜນຜັງລະອຽດຂອງກິດຈະກຳ ຢູ່ຖະໜົນວຽງຮາຕີ ບົນພື້ນຖານໃຫ້ເປັນຖະໜົນຄົນຍ່າງໃຫ້ມີການເຊື່ອມຕໍ່ໄປຮອດທາດຄຳ ແລະ ປະຕູໄຊ-ກະຊວງຍຸຕິທຳເກົ່າ;

2. ກຳນົດເນື້ອໃນ, ແຜນການ ລາຍການ ແລະ ເປົ້າໝາຍຜູ້ເຂົ້າຮ່ວມ ກິດຈະກຳຢູ່ຖະໜົນວຽງຣາຕີ;

3. ສ້າງບົດປະເມີນຜົນກະທົບສິ່ງແວດລ້ອມ ແລະ ແຜນແກ້ໄຂ ຢ່າງມີປະສິດທິພາບ;

4. ຄົ້ນຄ້ວາຈັດສັນ ຄວາມເປັນລະບຽບຮຽບຮ້ອຍ ແລະ ແຜນຮັກສາຄວາມສະຫງົບປອດໄພ ຢູ່ຖະໜົນວຽງຣາຕີ ແລະ ບໍລິເວນອ້ອມຮອບ;

5. ປະສານສົມທົບກັບກົມວິຈິດສິນ ແລະ ຄະນະທີ່ປຶກສາສະຖາປານິກໃນການອອກແບບ ຜັງລວມ ແລະ ຜັງລະອຽດ ຂອງກິດຈະກຳຖະໜົນວຽງຣາຕີ;

6. ແຕ່ງຕັ້ງໜ່ວຍງານຊ່ວຍວຽກຂອງຕົນ ຕາມຄວາມຈຳເປັນ ແລະ ເໝາະສົມ;

7. ນຳໃຊ້ຮ່ອງເງິນ ພັດທະນານະຄອນຫຼວງວຽງຈັນ ແລະ ລະດົມໄດ້ຈາກສັງຄົມ ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ;

8. ລາຍງານຄວາມຄືບໜ້າໃນການເຄື່ອນໄຫວວຽກງານຂອງຕົນ ໃຫ້ການນຳນະຄອນຫຼວງວຽງຈັນ ຊາບຢ່າງເປັນປົກກະຕິ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ ຂອງເຈົ້າຄອງນະຄອນຫຼວງວຽງຈັນ.

**ມາດຕາ 3** ຫ້ອງວ່າການ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພະແນກໂຍທາທິການ ແລະ ຂົນສົ່ງ, ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ, ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ, ເມືອງຈັນທະບູລີ, ຄະນະທີ່ປຶກສາສະຖາປະນິກ, ບັນດາທ່ານທີ່ຖືກແຕ່ງຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ບ່ອນສົ່ງ:

| | |
|---|---|
| - ເຈົ້າຄອງ-ຮອງເຈົ້າຄອງ ນວ | 03 ສະບັບ; |
| - ກົມວິຈິດສິນ ກະຊວງ ຖວທ | 01 ສະບັບ; |
| - ຄະນະທີ່ປຶກສາສະຖາປານິກ | 01 ສະບັບ; |
| - ບັນດາພະແນກການ-ເມືອງກ່ຽວຂ້ອງ ບ່ອນລະ | 01 ສະບັບ; |
| - ບັນດາທ່ານທີ່ຖືກແຕ່ງຕັ້ງ ທ່ານລະ | 01 ສະບັບ; |
| - ເກັບມ້ຽນສຳເນົາ | 02 ສະບັບ. |

ນະຄອນຫຼວງວຽງຈັນ

ເຈົ້າຄອງນະຄອນ

ອາດສະພັງທອງ ສີພັນດອນ